

# 12 ການສຶກສາ

ເດັກນ້ອຍທຸກໆຄົນ ບໍ່ວ່າຈະແມ່ນເດັກຫູໜວກ ຫຼື ເດັກຫູດີ ລ້ວນແຕ່ແມ່ນມີສິດທິ ໃນການ ສຶກສາ. ເດັກທີ່ໄດ້ຮັບການສຶກສາມີໂອກາດຫຼາຍກວ່າ ໃນການຮຽນຮູ້ກ່ຽວກັບໂລກອ້ອມຂ້າງ, ພັດທະນາທັກສະດ້ານຕ່າງໆ ແລະ ມີໂອກາດໃນການຊອກວຽກເຮັດງານທໍາ. ການສຶກສາຍິ່ງມີຄວາມສໍາຄັນເປັນພິເສດສໍາລັບເດັກຫູໜວກ ເພາະວ່າການສຶກສາຊ່ວຍພັດທະນາຄວາມຄິດ, ເຮັດໃຫ້ ເຂົາເຈົ້າມີໂອກາດສື່ສານກັບເດັກຫູໜວກ ແລະ ເດັກຫູດີຜູ້ອື່ນໆ. ພ້ອມທັງເສີມສ້າງເພື່ອນມິດໃຫ້ແກ່ເດັກ. ໂດຍໝູນໃຊ້ບັນດາທັກສະທີ່ພວກເຂົາໄດ້ຮຽນຮູ້, ເດັກຫູໜວກສາມາດດໍາລົງ ຊີວິດໄດ້ຢ່າງມີຄຸ່ນຄ່າ ແລະ ເປັນເຈົ້າຕົນເອງ ພ້ອມທັງສາມາດດໍາລົງຊີວິດໃນສັງຄົມໄດ້.

ເຖິງແມ່ນວ່າ ປຶ້ມເຫຼັ້ມນີ້ ສ່ວນໃຫຍ່ແມ່ນສໍາລັບເດັກຈາກໄລຍະເກີດ ເຖິງອາຍຸ 5 ປີ ກໍ່ຕາມ, ແຕ່ໃນບົດນີ້ໄດ້ປະກອບມີບາງຫົວຂໍ້ທີ່ສໍາຄັນພົວພັນເຖິງການສຶກສາສໍາລັບເດັກຫູໜວກ ທີ່ຢູ່ໃນເກນອາຍຸທີ່ສູງຂຶ້ນ, ພ້ອມທັງຊ່ວຍໃຫ້ພໍ່ແມ່ຂອງເດັກຮູ້ຈັດວາງແຜນການສຶກສາໃຫ້ແກ່ ລູກຂອງພວກເຂົາ.

## ການຮຽນຮູ້ແມ່ນເລີ່ມຕົ້ນຈາກເຮືອນ

ການຮຽນຮູ້ແມ່ນເລີ່ມຕົ້ນຈາກເຮືອນ, ເລີ່ມຈາກໄລຍະອາຍຸຂອງເດັກເກີດໃໝ່ ແລະ ສືບຕໍ່ຈົນຕະຫຼອດຊົ່ວຊີວິດຂອງເຂົາ. ຄອບຄົວແມ່ນມີບົດບາດສໍາຄັນໃນການຊ່ວຍເຫຼືອການສຶກສາໃຫ້ແກ່ເດັກ. ພໍ່ແມ່ ແລະ ສະມາຊິກຄອບຄົວເປັນຄູຜູ້ທໍາອິດ ທີ່ມີຄວາມສໍາຄັນຢູ່ເຮືອນ ເດັກເລີ່ມຕົ້ນຮຽນຮູ້ການສື່ສານ, ການຄົ້ນຄິດ ແລະ ພົວພັນກັບຄົນອື່ນໆ.

ຊຸມຊົນບາງແຫ່ງມີອາຈານ ແລະ ຄົນຫູໜວກ ທີ່ເຂົ້າໄປຕາມບ້ານ ເພື່ອຊ່ວຍເຫຼືອພໍ່ແມ່ໃຫ້ຮູ້ຈັກວິທີສື່ສານກັບລູກຂອງພວກເຂົາທີ່ຫູໜວກ. ພວກເຂົາສະແດງກິດຈະກໍາທີ່ໃຫ້ພໍ່ແມ່ ແລະ ລູກສາມາດເຮັດຮ່ວມກັນເພື່ອການຮຽນຮູ້ທາງພາສາ.



# ການຮຽນຮູ້ສືບຕໍ່ໃນຊຸມຊົນ




ການສຶກສາ, ເລີ່ມຕົ້ນໃນຫຼາຍສະຖານທີ່ຢູ່ໃນຫຼາຍໆສະຖານະການ ເຊັ່ນ: ຢູ່ທີ່ເຮືອນ, ຊຸມຊົນ ແລະ ໃນໂຮງຮຽນ.

ເດັກຮຽນຮູ້ທັກສະຕ່າງໆໃນການດຳລົງຊີວິດໃນຊຸມຊົນ ຈາກຄອບຄົວ ແລະ ເພື່ອນຝູງ. ເດັກນ້ອຍຮຽນຮູ້ການດຳລົງຊີວິດກັບຄົນອື່ນໆ ໂດຍຜ່ານການສັງເກດເດັກ ແລະ ຄົນອື່ນໆສົນທະນາ, ຫຼິ້ນ ແລະ ເຮັດວຽກຮ່ວມກັນ. ພວກເຂົາຮຽນຮູ້ທີ່ຈະໄປເຖິງສະຖານທີ່ ທີ່ຕ້ອງການ ໂດຍການຍ່າງ, ຂີ່ລົດ ຫຼື ຂັບລົດ. ຮຽນຮູ້ການຊື້ ແລະ ຂາຍ, ການຊຳລະບິນ ແລະ ວິທີເຮັດສິ່ງຕ່າງໆ ໃຫ້ສຳເລັດ. ພວກເຂົາຮຽນຮູ້ການເກັບຟືນ, ຜົນລະປູກ, ປາ, ຮຽນຮູ້ການຖັກແສ່ວ, ປະດິດເຄື່ອງຫັດຖະກຳ ແລະ ບັນດາທັກສະອື່ນໆ.

ເດັກຍັງຮຽນຮູ້ກ່ຽວກັບອາລົມຂອງຕົນເອງ ແລະ ສ້າງແນວຄິດພາກພູມໃຈໃນຕົວເອງ, ເມື່ອພວກເຂົາໄດ້ເຂົ້າຮ່ວມໃນຊຸມຊົນ. ເກມຫຼິ້ນຂອງເດັກກໍ່ແມ່ນຮູບການໜຶ່ງ ເພື່ອຮຽນຮູ້ການຢູ່ຮ່ວມກັນໃນຊຸມຊົນ. (ບົດທີ 10 ແລະ ບົດທີ 11 ອະທິບາຍວິທີເຮັດໃຫ້ເດັກຢູ່ຮ່ວມກັບຊຸມຊົນ ແລະ ພັດທະນາທັກສະທາງສັງຄົມທີ່ດີ).

ເມື່ອເດັກໃຫຍ່ຂຶ້ນພວກເຂົາກໍ່ກຽມພ້ອມສຳລັບການເຂົ້າໂຮງຮຽນ. ການສຶກສາຮ່ຳຮຽນໃນໂຮງຮຽນຈະເສີມສ້າງທັກສະທີ່ເດັກໄດ້ຮຽນຮູ້ແລ້ວຈາກເຮືອນ ແລະ ຊຸມຊົນຂອງພວກເຂົາ. ສິ່ງທີ່ເດັກຈະໄດ້ຮຽນຮູ້ຈາກໂຮງຮຽນນັ້ນ ແມ່ນບັນດາທັກສະເພື່ອເຮັດໃຫ້ເດັກພ້ອມສຳລັບການດຳລົງຊີວິດແບບຜູ້ໃຫຍ່.

# ການເຂົ້າໂຮງຮຽນແມ່ນສິ່ງສຳຄັນສຳລັບເດັກຫູໜວກ




ການສຶກສາຢູ່ໃນໂຮງຮຽນ ປັບປຸງຄວາມສາມາດໃນການສື່ສານຂອງເດັກຫູໜວກ ແລະ ເດັກທີ່ມີບັນຫາໃນການໄດ້ຍິນ, ສຶກສາໃຫ້ເດັກສາມາດດຳລົງຊີວິດຢ່າງເປັນປະໂຫຍດ ແລະ ສາມາດຊ່ວຍເຫຼືອຄອບຄົວຂອງຕົນເອງໄດ້.

ຢູ່ທີ່ໂຮງຮຽນ, ເດັກຮຽນຮູ້ການອ່ານ ແລະ ຂຽນ ການອ່ານ ແລະ ຂຽນແມ່ນວິທີ ທີ່ເດັກຫູໜວກສາມາດສື່ສານກັບເດັກຄົນອື່ນທີ່ບໍ່ຮູ້ພາສາມື ແລະ ບໍ່ເຂົ້າໃຈຄຳເວົ້າຂອງພວກເຂົາ. ການອ່ານເຮັດໃຫ້ເດັກທີ່ມີບັນຫາໃນການໄດ້ຍິນ ເຂົ້າໃຈແນວຄິດ, ອາລົມ ແລະ ປະສົບປະການຂອງຄົນອື່ນ. ການຂຽນຊ່ວຍໃຫ້ພວກເຂົາສື່ສານ ແລະ ແລກປ່ຽນຄວາມຄິດເຫັນ ຄວາມຮູ້ສຶກກັບຄົນອື່ນ.

**ເດັກຍິງຫູໜວກຍິ່ງຕ້ອງໄດ້ຮັບການສຶກສາ!**

ເປັນສິ່ງທີ່ຍາກຍິ່ງຂຶ້ນທີ່ເດັກຍິງຫູໜວກຈະໄດ້ຮັບການສຶກສາ. ເດັກຍິງທີ່ມີບັນຫາໃນການໄດ້ຍິນສ່ວນຫຼາຍແມ່ນຖືກປະໃຫ້ຢູ່ແຕ່ໃນເຮືອນ ເພື່ອເຮັດວຽກເຮືອນ. ເຖິງແມ່ນວ່າຫຼັງຈາກອ້າຍເອື້ອຍຂອງນາງໄປໂຮງຮຽນ ຫຼື ແຕ່ງດອງແລ້ວກໍ່ຕາມ.

ເປັນຫຍັງເດັກຍິງຫູໜວກຈໍາເປັນຕ້ອງໄດ້ຮູ້ກ່ຽວກັບໂລກພາຍນອກ? ເດັກຍິງຫູໜວກຕ້ອງໄດ້ຮຽນຮູ້ບັນດາທັກສະຕ່າງໆ ເພື່ອຊ່ວຍເຂົາຢູ່ຢ່າງປອດໄພ ແລະ ເຂົ້າຮ່ວມໃນຊຸມຊົນໄດ້. ເຂົາຄວນຮັບຮູ້ກ່ຽວກັບສິດທິຂອງເຂົາ, ໄດ້ຮຽນຮູ້ທັກສະເພື່ອປະກອບອາຊີບ ແລະ ດໍາລົງຊີວິດ ຢ່າງເປັນເຈົ້າຕົນເອງ.

ຖ້າປາສະຈາກການສື່ສານ ແລະ ການສຶກສາ, ເດັກຍິງຫູໜວກບໍ່ສາມາດຮຽນຮູ້ກ່ຽວກັບລະບຽບຂອງສັງຄົມ ຫຼື ເຂົ້າໃຈການປ່ຽນແປງທາງຮ່າງກາຍຂອງຕົນ. ເດັກຍິງຫູໜວກຫຼາຍຄົນຖືພາໂດຍບໍ່ເຂົ້າໃຈວ່າມັນເກີດຂຶ້ນໄດ້ແນວໃດ ແລະ ຍ້ອນຫຍັງ. ໃນບາງຂົງເຂດຢູ່ໃນໂລກ, ແມ່ຍິງຫູໜວກຕິດເຊື້ອເອດ (HIV/AIDS) ຫຼາຍກວ່າແມ່ຍິງທົ່ວໄປ ຍ້ອນວ່າພວກເຂົາບໍ່ມີທີນທາງຮັບເອົາຂໍ້ມູນຂ່າວສານ ເພື່ອປ້ອງກັນຕົນເອງໃຫ້ປອດໄພ.




# ໂຮງຮຽນປະເພດຕ່າງໆ ສໍາລັບເດັກຫູໜວກ

ເດັກນ້ອຍຫູໜວກ ຫຼື ມີບັນຫາໃນການຟັງ ສາມາດໄປໂຮງຮຽນ ແລະ ຮຽນໃຫ້ຫລາຍ ຮຽນຮູ້ທັກສະ ເພື່ອຈະຫາລ້ຽງຊີບ ເຂົາສາມາດຮຽນໃນຫ້ອງຮຽນປົກກະຕິ ພ້ອມກັບເດັກທົ່ວໄປ ຫລື ແຍກອອກໄປຮຽນກັບເດັກຫູໜວກດ້ວຍກັນ.



ເຖິງແມ່ນວ່າ ທ່ານອາດບໍ່ມີທາງເລືອກຫຼາຍ ໃນການເລືອກປະເພດຂອງໂຮງຮຽນທີ່ຈະສົ່ງ ລູກຂອງທ່ານເຂົ້າຮຽນ, ການຮູ້ຈັກກ່ຽວກັບໂຮງຮຽນ ແມ່ນມີຄວາມສຳຄັນ ເພາະວ່າ:

- ມັນຊ່ວຍໃຫ້ທ່ານໄດ້ຄົ້ນຄິດຫາສິ່ງທີ່ດີສຸດ ສຳລັບລູກຂອງທ່ານ.
- ມັນຊ່ວຍໃຫ້ທ່ານເຮັດວຽກສົມທົບກັບໂຮງຮຽນ ເພື່ອເຮັດໃຫ້ໂຮງຮຽນຫຼັງນັ້ນດີຂຶ້ນສຳລັບເດັກຫູໜວກ.
- ຊ່ວຍໃຫ້ທ່ານໄດ້ເຮັດວຽກກັບຊຸມຊົນ ເພື່ອເຮັດໃຫ້ມີໂຮງຮຽນສຳລັບຄົນຫູໜວກຕາມທີ່ບັນດາພໍ່ແມ່ປາຖະໜາ.

## ໂຮງຮຽນ ແລະ ພາສາ

ໂດຍປົກກະຕິແລ້ວ ໂຮງຮຽນທີ່ສອນເດັກຫູໜວກ ຈະເອົາໃຈໃສ່ສອນພາສາປະເພດໃດໜຶ່ງ ອາດຈະແມ່ນພາສາເວົ້າ (ສຳລັບຄົນຫູໜວກ) ຫຼື ພາສາມື. ໂຮງຮຽນບາງແຫ່ງສອນໃຫ້ເດັກເວົ້າ ແລະ ໃຊ້ພາສາມືໃນເວລາດຽວກັນ ຫຼື ເວົ້າໄປພ້ອມກັບການໃຊ້ນິ້ວມືສະກົດຄຳເວົ້າ. ພວກເຂົາໝູນໃຊ້ ພາສາມື, ທ່າທາງ, ຮູບພາບ, ການອ່ານຮີມສົບ, ສຽງເວົ້າ, ພ້ອມທັງການອ່ານ ແລະ ຂຽນ.

ໂດຍທົ່ວໄປ ຄູທີ່ໃຊ້ພາສາເວົ້າ ແລະ ຄູຜູ້ໃຊ້ພາສາມື ແມ່ນມັກບໍ່ເຫັນພ້ອມນຳກັນກ່ຽວກັບຮູບແບບຂອງອີກຝ່າຍໜຶ່ງ. ນີ້ເຮັດໃຫ້ເປັນເລື່ອງຫຍຸ້ງຍາກຫຼາຍສຳລັບພໍ່ແມ່ ໃນການຊອກຂໍ້ມູນວ່າຈຸດໃດແດ່ທີ່ເປັນຈຸດດີຂອງພາສາແຕ່ລະຮູບແບບ.



# ເດັກຫູໜວກ ສາມາດຮຽນຮ່ວມຫ້ອງກັບເດັກຫູດີ

ການສິດສອນເດັກຫູໜວກ ແລະ ເດັກຫູດີໃນຫ້ອງດຽວກັນ ແມ່ນມັກເປັນວິທີທີ່ຊຸມຊົນ ໝູນໃຊ້ເພື່ອສື່ສານກັບເດັກຫູໜວກ. ເດັກທີ່ໄດ້ຍິນປົກກະຕິອາດກວນ ຫຼື ເຮັດເມີນເສີຍບໍ່ສົນໃຈເດັກຫູໜວກ ຍ້ອນວ່າເດັກຫູໜວກມີລັກສະນະການເວົ້າທີ່ແຕກຕ່າງ ຫຼື ຍ້ອນວ່າພວກເຂົາບໍ່ເຂົ້າໃຈວ່າຄົນອື່ນເວົ້າຫຍັງ. ແຕ່ຖ້າຄົນອ້ອມຂ້າງຫາກຢຸດເຊົາພຶດຕິກຳທີ່ທຳຮ້າຍຄວາມຮູ້ສຶກຂອງເດັກດັ່ງກ່າວແລ້ວ, ເດັກຫູໜວກຈະມີໂອກາດໃນການສ້າງເພື່ອນມິດກັບເດັກຫູດີ ແລະ ກາຍເປັນພາກສ່ວນໜຶ່ງຂອງຊຸມຊົນແຫ່ງນັ້ນໄດ້.

ໂຮງຮຽນບາງແຫ່ງສອນພາສາມືໃຫ້ນັກຮຽນທຸກຄົນ ເພື່ອບໍ່ໃຫ້ເດັກຫູໜວກຖືກປ່ອຍໃຫ້ໂດດດ່ຽວ. ຫຼືໃນໄລຍະເວລາພິເສດພວກເຂົາກໍ່ສອນໃຫ້ເດັກທີ່ມີບັນຫາໃນການໄດ້ຍິນໃຫ້ຮຽນເວົ້າ.

## ຄຸນປະໂຫຍດຂອງການຮຽນຮ່ວມກັບເດັກຫູດີ

- ເດັກຫູໜວກສາມາດສືບຕໍ່ດຳລົງຊີວິດຢູ່ເຮືອນຮ່ວມກັບຄອບຄົວຂອງພວກເຂົາ.
- ໂດຍທົ່ວໄປແມ່ນບໍ່ມີລາຍຈ່າຍສິ້ນເປືອງຫຼາຍ.

## ຂໍ້ຫຍຸ້ງຍາກຂອງການຮຽນຮ່ວມກັບເດັກຫູດີ

- ເດັກຫູດີ ອາດກໍ່ກວນ ຫຼື ເຮັດເມີນເສີຍບໍ່ສົນໃຈເດັກຫູໜວກ.
- ບັນດາອາຈານ ອາດບໍ່ມີຄວາມຮູ້ກ່ຽວກັບເດັກຫູໜວກ ຫຼື ບໍ່ຮູ້ວິທີສິດສອນເດັກທີ່ມີຄວາມສາມາດໃນການໄດ້ຍິນແຕກຕ່າງກັນ.
- ຄົນທີ່ຮູ້ພາສາມືດີ ອາດມີຈຳນວນໜ້ອຍ. ເຊິ່ງຈະເຮັດໃຫ້ພັດທະນາການທາງດ້ານຈິດໃຈຂອງເດັກໄດ້ຮັບຜົນກະທົບ.




*ເມື່ອເດັກດຳລົງຊີວິດຮ່ວມກັບຄົນອື່ນໆ ພວກເຂົາຮຽນຮູ້ທີ່ຈະຍອມ ຮັບຈຸດແຂງຂອງຄົນອື່ນ ແລະ ສະໜັບສະໜູນຊ່ວຍເຫຼືອເຊິ່ງກັນ ແລະ ກັນ.*

## ► ວິທີສະໜັບສະໜູນໃຫ້ເດັກຫູໜວກຮຽນໃນຫ້ອງຮຽນກັບເດັກຫູດີ

ພຽງແຕ່ການເປີດປະຕູໂຮງຮຽນໃຫ້ແກ່ເດັກຫູໜວກ ແມ່ນຍັງບໍ່ພຽງພໍ. ເດັກຫູໜວກທີ່ຮຽນໃນຫ້ອງຮຽນປົກກະຕິຮ່ວມກັບເດັກຫູດີ ຕ້ອງການອາຈານ ແລະ ເພື່ອນຮ່ວມຫ້ອງທີ່ສາມາດ ສື່ສານກັບເຂົາໄດ້. ບົດຮຽນຄວນຖືກສອນໃນຮູບແບບທີ່ເດັກຫູໜວກສາມາດເຂົ້າໃຈ ເພາະວ່າ ຖ້າເດັກບໍ່ເຂົ້າໃຈເຂົາກໍ່ຈະບໍ່ຢາກຮຽນ.

ຖ້າໂຮງຮຽນບໍ່ເອົາໃຈໃສ່ເດັກຫູໜວກຢ່າງພຽງພໍ, ພວກເຂົາຈະບໍ່ສາມາດຮຽນຮູ້ໄດ້ເໝືອນກັບເດັກຫູດີຜູ້ອື່ນ. ຖ້າທາງໂຮງຮຽນຄາດຫວັງໃນຄວາມສາມາດຂອງເດັກຕໍ່າ, ໃຫ້ເດັກຫູໜວກຮຽນໜ້ອຍກວ່າເດັກຄົນອື່ນໆ ນີ້ກໍ່ເປັນຄວາມຄິດທີ່ບໍ່ຖືກຕ້ອງ ແລະ ເປັນຜົນຮ້າຍຕໍ່ໝົດທຸກຄົນ.

**ສະເໜີການຝຶກອົບຮົມເພີ່ມເຕີມສຳລັບອາຈານເພື່ອໃຫ້ພວກເຂົາສາມາດສື່ສານກັບເດັກຫູໜວກ**

ຄູອາຈານທີ່ບໍ່ເຄີຍເຮັດວຽກກັບເດັກຫູໜວກ ຫຼື ກັບເດັກທີ່ມີບັນຫາໃນການໄດ້ຍິນ ອາດບໍ່ມີຄວາມໝັ້ນໃຈກ່ຽວກັບວິທີສິດສອນພວກເຂົາ. ໃຫ້ແນະນຳອາຈານກ່ຽວກັບຄວາມຕ້ອງການ ແລະ ຄວາມສາມາດຂອງເດັກ ແລະ ແນະນຳວິທີງ່າຍດາຍຕ່າງໆ ເພື່ອເຮັດໃຫ້ການຮຽນຂອງເດັກງ່າຍຂຶ້ນ.

ຖ້າເດັກສາມາດໄດ້ຍິນຢູ່ໜ້ອຍໜຶ່ງ ແລະ ຮູ້ອ່ານຮີມສົບ, ອາຈານຄວນຫັນໜ້າໃສ່ເດັກເມື່ອເວລາເວົ້າ ແລະ ເຮັດໃຫ້ເດັກເຫັນສົບທຸກຄັ້ງ.

ໃຫ້ເດັກຫູໜວກນັ່ງຢູ່ໃກ້ໆກັບອາຈານ. ເພື່ອໃຫ້ເດັກສາມາດສັງເກດເຫັນການເໜັງຕີງຂອງຮີມສົບ. ລາວຈຶ່ງຈະບໍ່ຖືກລົບກວນຈາກການເຄື່ອນເໜັງຂອງເດັກຄົນອື່ນໃນຫ້ອງ.



### ຊ່ວຍໃຫ້ໂຮງຮຽນສາມາດສະໜອງຄວາມຕ້ອງການຂອງເດັກຫູໜວກ

- ອາຈານຄວນກະກຽມຄວາມພ້ອມໃຫ້ແກ່ອາຈານດ້ວຍກັນ ແລະ ນັກຮຽນຄົນອື່ນໆໃຫ້ເຂົ້າໃຈກ່ຽວກັບຄົນຫູໜວກ ແລະ ວິທີຮຽນ ໂດຍຜ່ານການສັງເກດ, ການເບິ່ງຂອງເດັກຫູໜວກ ເຊິ່ງຈະຊ່ວຍໃຫ້ທຸກຄົນໃນໂຮງຮຽນກຽມພ້ອມເພື່ອຕ້ອນຮັບພວກເຂົາ.



- ຜູ້ໃຫຍ່ຫູໜວກ ສາມາດຊ່ວຍສອນພາສາມືໃຫ້ແກ່ນັກຮຽນ ແລະ ອາຈານ. ພວກເຂົາສາມາດຊ່ວຍອາຈານໂດຍການຮ່ວມໃນໂມງຮຽນ ເພື່ອໃຫ້ຄວາມສົນໃຈພິເສດຕື່ມແກ່ເດັກຫູໜວກ.
- ເນື່ອງຈາກເດັກຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນຕ້ອງໄດ້ຮຽນຮູ້ໂດຍຜ່ານການເບິ່ງ. ສະນັ້ນ ທາງໂຮງຮຽນຄວນຊ່ວຍໃຫ້ພວກເຂົາໄດ້ຮັບການກວດສອບສາຍຕາ ແລະ ໄດ້ໃສ່ແວ່ນຕາ ຖ້າວ່າຈຳເປັນ.

ພໍ່ແມ່ຂອງເດັກຄວນໄດ້ພົບປະກັບອາຈານທີ່ສອນ ເພື່ອສອບຖາມຂໍ້ມູນກ່ຽວກັບສິ່ງທີ່ເດັກຮຽນ ແລະ ວິທີທີ່ເຂົາກຳລັງຮຽນ. ເຊິ່ງຈະຊ່ວຍໃຫ້ພໍ່ແມ່ສາມາດເສີມສ້າງຕື່ມສິ່ງທີ່ເດັກກຳລັງຮຽນຢູ່ໂຮງຮຽນ. ພໍ່ແມ່ເອງ ກໍ່ສາມາດແລກປ່ຽນໃຫ້ອາຈານຮູ້ສິ່ງທີ່ເດັກເຮັດເມື່ອຢູ່ເຮືອນ.

ເຊິ່ງຈະເຮັດໃຫ້ອາຈານສາມາດນຳເອົາສິ່ງຕ່າງໆຈາກປະສົບການຂອງເດັກ ເພື່ອສອດເຂົ້າໃສ່ໃນບົດຮຽນຂອງເຂົາ.

# ເດັກຫູໜວກສາມາດຮຽນໃນກຸ່ມຂອງພວກເຂົາ

ເດັກຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນ ສາມາດຮຽນໃນຫ້ອງຮຽນທີ່ແຍກຕ່າງຫາກ ສຳລັບພວກເຂົາໃນໂຮງຮຽນທ້ອງຖິ່ນ ຫຼື ໃນໂຮງຮຽນທີ່ມີການແຍກວັນ ຫຼື ໃນໂຮງຮຽນກິນນອນ.

ມີໂຮງຮຽນທີ່ແຍກສະເພາະ ເພື່ອການສຶກສາຮ່ຳຮຽນສຳລັບເດັກຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນ.

ສຳລັບເດັກເຫຼົ່ານີ້ ໃນການຮ່ຳຮຽນໃນຫ້ອງຮຽນ ຫຼື ໂຮງຮຽນລັກສະນະນີ້. ການນຳເອົາເດັກຫູໜວກມາຢູ່ຮ່ວມກັນໃນຫ້ອງຮຽນ ຫຼື ໂຮງຮຽນເຮັດໃຫ້ ພວກເຂົາມີສັງຄົມຂອງພວກເຂົາເອງ, ບໍ່ດັ່ງນັ້ນພວກເຂົາອາດຖືກປ່ອຍໃຫ້ຢູ່ຢ່າງໂດດດ່ຽວ.

ເມື່ອເດັກໄດ້ເຂົ້າໂຮງຮຽນເຫຼົ່ານີ້, ເດັກຈະໄດ້ຮຽນພາສາມື. ສະມາຊິກໃນຄອບຄົວຄົນອື່ນໆກໍ່ສາມາດສື່ສານກັບເດັກໄດ້ດີຂຶ້ນຖ້າພວກເຂົາຫາກຮຽນພາສາມືຄືກັນ.






## ໂຮງຮຽນກິນນອນ

ເດັກຫູໜວກພັກຢູ່ໃນໂຮງຮຽນເຫຼົ່ານີ້ ແລະ ກັບຄືນບ້ານໃນທ້າຍອາທິດ ແລະ ໃນວັນພັກຕ່າງໆ. ເດັກທີ່ພັກຢູ່ໂຮງຮຽນກິນນອນສ່ວນຫຼາຍ ແມ່ນໄດ້ຮຽນທັກສະສຳລັບການເຮັດວຽກເຊັ່ນ: ຄອມພິວເຕີ, ກົນຈັກ, ສິລະປະ ແລະ ງານຟາມ ລວມໄປເຖິງການອ່ານການຂຽນ ແລະ ວິຊາເລກ.

ບາງຄັ້ງຄອບຄົວຂອງເດັກຫູໜວກກໍ່ມີຄວາມກັງວົນເມື່ອເດັກຕ້ອງໄດ້ຢູ່ໄກບ້ານ. ການສື່ສານກັບຄອບຄົວຂອງເດັກຜູ້ອື່ນໆ, ການໄປຢ້ຽມຢາມເດັກທີ່ໂຮງຮຽນ, ພົບປະກັບເພື່ອນ ແລະ ຄູອາຈານຂອງເດັກສາມາດຊ່ວຍໃຫ້ ພໍ່ແມ່ຫຼຸດຜ່ອນຄວາມຮູ້ສຶກກັງວົນລົງໄດ້ ເມື່ອລູກຂອງພວກເຂົາຕ້ອງຈາກບ້ານເພື່ອເຂົ້າຮຽນໃນໂຮງຮຽນກິນນອນ.

ຢູ່ທີ່ໂຮງຮຽນກິນນອນ ກໍ່ເໝືອນກັບສະຖານທີ່ອື່ນໆ ເຊິ່ງມີໂອກາດທີ່ເດັກຈະຖືກລ່ວງລະເມີດ ພໍ່ແມ່ຕ້ອງກະຕຸ້ນໃຫ້ລູກທີ່ເຂົ້າໂຮງຮຽນກິນນອນ ບອກ ຫຼື ສື່ສານກ່ຽວກັບບັນຫາຂອງພວກເຂົາກັບອາຈານ, ພໍ່ຮັກແມ່ຮັກ ແລະ ຄົນອື່ນໆ.

ເດັກຫູໜວກທີ່ເຂົ້າຮຽນໃນໂຮງຮຽນກິນນອນ ສ່ວນຫຼາຍແມ່ນໄດ້ຮັບປະສົບການທີ່ດີ. ເຖິງຈະຄິດຮອດບ້ານ, ໂຮງຮຽນໄດ້ໃຫ້ໂອກາດພວກເຂົາໃນການພົວພັນກັບກຸ່ມຄົນທີ່ກວ້າງອອກ ເດັກຫູໜວກໄດ້ສ້າງສາຍສຳພັນອັນສະໜິດສະໜົມກັບເດັກຄົນອື່ນ ແລະ ພະນັກງານທີ່ຢູ່ໃນໂຮງຮຽນ.

## ວັນເຂົ້າໂຮງຮຽນສະເພາະເດັກຫູໜວກ

ເດັກໄປໂຮງຮຽນໃນວັນທີ່ສອນສະເພາະເດັກ ຫູໜວກ. ເດັກຍັງພັກຢູ່ເຮືອນນຳຄອບຄົວຂອງພວກເຂົາ ແລະ ສືບຕໍ່ການພົວພັນກັບເດັກຫູດີ ແລະ ຜູ້ໃຫຍ່ຢູ່ທີ່ຊຸມຊົນຂອງພວກເຂົາ.



## ຫ້ອງຮຽນສະເພາະສຳລັບເດັກຫູໜວກໃນໂຮງຮຽນທ້ອງຖິ່ນ

ໃນໂຮງຮຽນບາງແຫ່ງ, ເດັກຫູໜວກໃຊ້ເວລາໝົດມື້ຢູ່ໃນຫ້ອງຮຽນທີ່ແຍກຕ່າງຫາກ ແລະ ມີໂອກາດພົບກັບເດັກຫູດີ ແຕ່ໃນໄລຍະພັກຂັ້ນຊົ່ວໂມງ. ໃນບາງໂຮງຮຽນນັກຮຽນຫູໜວກໃຊ້ເວລາຕອນໃດຕອນໜຶ່ງໃນຫ້ອງຮຽນຮ່ວມກັບເດັກຫູດີ, ເພື່ອຮຽນສິລະປະ ແລະ ເຮັດບົດເຝິກຫັດ. ອາຍຸ ແລະຄວາມສາມາດຂອງເດັກແຕ່ລະຄົນໃນຫ້ອງຮຽນພິເສດ ນີ້ແມ່ນແຕກຕ່າງກັນ.



## ຄຸນປະໂຫຍດຂອງການຮຽນນຳແຕ່ເດັກຫູໜວກ

- ຫ້ອງຮຽນ ແລະ ໂຮງຮຽນສຳລັບເດັກຫູໜວກ ມີຄູອາຈານທີ່ໄດ້ຮັບການຝຶກອົບຮົມເປັນພິເສດ ສຳລັບການສິດສອນເດັກຫູໜວກ. ໂດຍທົ່ວໄປ ອາຈານເຫຼົ່ານີ້ແມ່ນສາມາດຕອບສະໜອງຕາມຄວາມຕ້ອງການຂອງເດັກ ແລະ ເອົາໃຈໃສ່ເດັກແຕ່ລະຄົນ.
- ເດັກຫູໜວກຮູ້ສຶກໂດດດ່ຽວໜ້ອຍລົງ ເມື່ອພວກເຂົາສາມາດສື່ສານກັບຄົນອື່ນ ຢູ່ອ້ອມຂ້າງໄດ້ທັງໝົດ.
- ເດັກຫູໜວກມີໂອກາດຫຼິ້ນ, ຮຽນ, ພັດທະນາທັກສະທາງສັງຄົມ ແລະ ສ້າງເພື່ອນມິດ.
- ເດັກສາມາດພົບປະ ແລະ ພົວພັນກັບຜູ້ໃຫຍ່ຫູໜວກ ທີ່ເຮັດວຽກຢູ່ໂຮງຮຽນແຫ່ງນັ້ນ.
- ຫ້ອງຮຽນ ຫຼື ໂຮງຮຽນສຳລັບເດັກຫູໜວກບາງແຫ່ງ ຊ່ວຍໃຫ້ເດັກໄດ້ຮັບການກວດສອບການໄດ້ຍິນ ແລະ ໃສ່ເຄື່ອງຊ່ວຍຟັງ.



## ຂໍ້ຫຍຸ້ງຍາກຂອງການຮຽນນຳແຕ່ເດັກຫູໜວກ

- ເດັກຫູໜວກທີ່ຮຽນໃນໂຮງຮຽນທີ່ແຍກຕ່າງຫາກອາດບໍ່ສາມາດຮຽນຮູ້ວິທີດຳລົງຊີວິດ ແລະ ການພົວພັນຢ່າງສະດວກສະບາຍກັບຄົນອື່ນໆໃນໂລກທີ່ຄົນອື່ນສາມາດໄດ້ຍິນ.
- ໂຮງຮຽນອາດຕັ້ງຢູ່ໄກ ແລະ ມີລາຍຈ່າຍສູງ.
- ໃນຫ້ອງຮຽນອາດປະກອບມີເດັກທີ່ມີເກນອາຍຸທີ່ແຕກຕ່າງກັນ. ຈຶ່ງອາດສ້າງຄວາມຫຍຸ້ງຍາກໃຫ້ແກ່ອາຈານ ໃນການສະໜອງຕາມຄວາມຕ້ອງການໃຫ້ເດັກທຸກໆຄົນທີ່ແຕກຕ່າງກັນ.



# ໂຮງຮຽນເຮັດຫຍັງສຳລັບເດັກຫູໜວກ?

ໂຮງຮຽນທີ່ສະໜອງຕາມຄວາມຕ້ອງການຕ່າງໆ ຂອງເດັກຫູໜວກສາມາດເຮັດໃຫ້ຊີວິດຂອງເດັກມີການປ່ຽນແປງທີ່ດີຂຶ້ນຫຼາຍ.

ໂຮງຮຽນຄວນມີເວລາໃຫ້ແກ່ເດັກຫູໜວກ ຮຽນ ແລະ ຫຼິ້ນຮ່ວມກັບເດັກຫູດີ ແລະ ບໍ່ປ່ອຍໃຫ້ເດັກກວນ ຫຼື ຢອກລໍ້ເຊິ່ງກັນ ແລະ ກັນ. ເມື່ອໂຮງຮຽນສອນກ່ຽວກັບປະຫວັດສາດ ແລະ ຄວາມສຳຄັນຂອງຄົນຫູໜວກ ແລະ ຊຸມຊົນຄົນຫູໜວກ ມັນຈະຊ່ວຍໃຫ້ເດັກຮູ້ສຶກວ່າ ຕົນເອງກໍ່ສຳຄັນ ແລະ ສ້າງແນວຄິດພາກພູມໃຈໃນຕົນເອງໃຫ້ແກ່ເດັກ.

ໃນເບື້ອງຕົ້ນເມື່ອໂຮງຮຽນລວມມີທັງເດັກຫູໜວກ ພວກເຂົາຈະເຮັດຜິດຢູ່ຕະຫຼອດ ເຖິງແມ່ນວ່າພວກເຂົາຈະມີເຈດຕະນາດີກໍ່ຕາມ. ໂຮງຮຽນຈະຕ້ອງໄດ້ສຶກສາກ່ຽວກັບຄວາມຫູໜວກ ເຊັ່ນກັນກັບເດັກຫູໜວກທີ່ຕ້ອງໄດ້ສຶກສາກ່ຽວກັບໂຮງຮຽນ. ນີ້ແມ່ນເລື່ອງຂອງຄອບຄົວໜຶ່ງທີ່ລູກສາວໄດ້ຮັບການສຶກສາ ແລະກ່ຽວກັບການປ່ຽນແປງວິຖີຊີວິດຂອງນາງ.






# ເລື່ອງຂອງ ໂອຢຸນນາ

ເມື່ອໂອຢຸນນາ ອາຍຸໄດ້ 7 ປີ ລາວໄດ້ເລີ່ມເຂົ້າຮຽນຮ່ວມກັບເດັກຄົນອື່ນທີ່ຢູ່ໃນໄວດຽວກັນທີ່ໂຮງຮຽນຂອງເມືອງ. ໃນເມືອງນ້ອຍໆແຫ່ງໜຶ່ງໃນປະເທດມົງໂກລີ, ພໍ່ແມ່ຂອງນາງໄດ້ພະຍາຍາມຢ່າງໜັກ ເພື່ອຂໍໃຫ້ທາງໂຮງຮຽນຮັບເອົາລູກສາວຂອງພວກເຂົາເຂົ້າຮຽນ. ຄວາມເຊື່ອຕາມປະເພນີຂອງປະເທດມົງໂກລີເຊື່ອວ່າ ເດັກຫູໜວກ ແມ່ນ "ບໍ່ປົກກະຕິ" ແລະ ບໍ່ຄວນຢູ່ຮ່ວມກັບເດັກ "ປົກກະຕິ". ພໍ່ແມ່ຂອງນາງໂຊກດີຫຼາຍທີ່ອຳນວຍການຂອງໂຮງຮຽນແຫ່ງດັ່ງກ່າວຮັບເອົານາງເຂົ້າຮຽນ.

ແຕ່ເຖິງແມ່ນວ່າໂອຢຸນນາ ຈະໄດ້ເຂົ້າໂຮງຮຽນແຕ່ນາງບໍ່ມີວິທີສື່ສານກັບຄົນອື່ນໆ ມີພຽງແຕ່ທ່າທາງຈຳນວນໜຶ່ງ, ການຊີ້ບອກ ແລະ ສຽງບາງສຽງເທົ່ານັ້ນ. ໃນທີ່ສຸດກໍ່ເຫັນວ່າ ໂອຢຸນນາບໍ່ສາມາດຮຽນໄດ້. ພໍ່ແມ່ຂອງໂອຢຸນນາ ເລີ່ມຮູ້ສຶກສິ້ນຫວັງ ເພາະໂຮງຮຽນສຳລັບເດັກຫູໜວກແຫ່ງດຽວໃນປະເທດແມ່ນຢູ່ໃນເມືອງຫຼວງ ເຊິ່ງຫ່າງໄກຈາກເຮືອນຂອງໂອຢຸນນາຫຼາຍ.

ຫຼັງຈາກນັ້ນ ຈຶ່ງມີເພື່ອນບ້ານຜູ້ໜຶ່ງມາບອກພວກເຂົາວ່າ ມີໂຄງການໃໝ່ຢູ່ທີ່ໂຮງຮຽນໃກ້ໆເຮືອນຂອງພວກເຂົາ. ອາຈານທີ່ໂຮງຮຽນແຫ່ງນັ້ນກໍ່ມີລູກຫູໜວກຄືກັນ, ລາວໄດ້ຊ່ວຍສອນອາຈານຄົນອື່ນໆ ກ່ຽວກັບພື້ນຖານຂອງພາສາມື. ເດັກຫູໜວກ ແລະ ເດັກຫູດີທັງໝົດກໍ່ໄດ້ຖືກສອນທັງ ພາສາມື ແລະ ຄຳເວົ້າ (ສຳລັບຄົນຫູໜວກ) ໃນຫ້ອງຮຽນຫ້ອງດຽວກັນ.

ປະຈຸບັນໂອຢຸນນາ ໄປໂຮງຮຽນຢ່າງມີຄວາມສຸກທຸກໆເຊົ້າ. ນັກຮຽນທີ່ຮຽນຮ່ວມຫ້ອງຂອງນາງຄົນໜຶ່ງສາມາດໄດ້ຮັບລາງວັນ ໃນການແຂ່ງຂັນເສັງວິຊາເລກ ຂອງບັນດາໂຮງຮຽນທັງໝົດໃນເມືອງດັ່ງກ່າວ ແລະ ໂອຢຸນນາເອງກໍ່ໄດ້ຮັບລາງວັນສຳລັບການຂຽນດີເດັ່ນ. ໂອຢຸນນາໄດ້ປ່ຽນແປງຈາກເດັກຍິງທີ່ໂສກ ແລະ ບໍ່ມີຮອຍຍິ້ມ ມາເປັນເດັກຍິງທີ່ມີຄວາມສຸກ, ມັກຫຼິ້ນ ແລະ ມັກຊ່ວຍເຫຼືອເພື່ອນຮ່ວມຫ້ອງ.



## ປະສົບການເຮັດໃຫ້ກາຍເປັນອາຈານທີ່ເກັ່ງ

ໂຮງຮຽນແຫ່ງໜຶ່ງໃນປະເທດ ຕັງຊານີ ມີອາຈານຜູ້ໜຶ່ງທີ່ຫູໜວກ. ເຖິງແມ່ນວ່າລາວຈະບໍ່ໄດ້ຮັບການຝຶກອົບຮົມຄູຢ່າງເປັນທາງການ, ແຕ່ໂດຍອາໄສຄວາມອົດທົນ ແລະ ທັດສະນະຄິດປະດິດສ້າງ ຊ່ວຍໃຫ້ອາຈານຄົນນີ້ສາມາດກະຕຸ້ນໃຫ້ເດັກແຕ່ລະຄົນສະແດງຄວາມສາມາດຂອງຕົນອອກມາ.

ເນື່ອງຈາກອາຈານຜູ້ນີ້ບໍ່ສາມາດໄດ້ຍິນສຽງ ລາວຕ້ອງ ໄດ້ເອົາມືວາງໄວ້ເທິງບ່າຂອງເດັກນ້ອຍ ເພື່ອສຳຜັດເອົາການສັ່ນໄຫວ ເມື່ອເດັກຮຽນເວົ້າ. ນອກນັ້ນ ລາວຍັງສາມາດນຳໃຊ້ພາສາມືກັບເດັກ, ຊ່ວຍໃຫ້ເດັກຮຽນຂຽນໜັງສື, ສອນໃຫ້ເດັກຮຽນວິຊາເລກໂດຍການນັບ ຝາຂວດແກ້ວຕ່າງໆ.

ຍ້ອນຫ້ອງຮຽນທີ່ນ້ອຍ. ດັ່ງນັ້ນລາວຈຶ່ງສາມາດເອົາໃຈໃສ່ເດັກນ້ອຍແຕ່ລະຄົນ. ລາວຮູ້ຈັກວິທີຄົ້ນຫາ ແລະ ໝູນໃຊ້ຄວາມສາມາດຂອງເດັກແຕ່ລະຄົນ ເພື່ອຊ່ວຍໃຫ້ເຂົາເຈົ້າຮຽນ.




## ໂຮງຮຽນທີ່ດີຕ້ອງມີອາຈານທີ່ອຸທິດຕົນໃຫ້ແກ່ການຮຽນ

ຄຸນທາດທີ່ສຳຄັນທີ່ສຸດຂອງການເປັນອາຈານ ແມ່ນຄວາມປາຖະໜາທີ່ຢາກເຫັນເດັກຫູໜວກຮຽນໄດ້ດີໃນໂຮງຮຽນ ແລະ ສາມາດນຳໃຊ້ໄດ້ໃນຊີວິດຕົວຈິງ. ຜູ້ເປັນອາຈານຕ້ອງໄດ້ໃຊ້ເວລາຮຽນຮູ້ກ່ຽວກັບຄວາມຕ້ອງການ ແລະ ຄວາມສາມາດຂອງເດັກແຕ່ລະຄົນ.

ຫຼາຍຄົນອາດຄິດວ່າ ອາຈານທີ່ໄດ້ຮັບການຝຶກອົບຮົມເປັນພິເສດ ແມ່ນເປັນອາຈານທີ່ດີທີ່ສຸດສຳລັບເດັກຫູໜວກ ສິ່ງນີ້ບໍ່ຖືກສະເໝີໄປ ການຝຶກອົບຮົມ ກ່ຽວກັບຄວາມຫູໜວກບໍ່ໄດ້ຊ່ວຍໃຫ້ອາຈານຄົນນັ້ນເກັ່ງຂຶ້ນໂດຍອັດຕະໂນມັດ. ອາຈານທີ່ສອນຄົນຫູໜວກຫຼາຍຄົນ ບໍ່ມີໂອກາດທີ່ຈະໄດ້ຮັບການສຶກສາຢູ່ພາຍໃນປະເທດ, ດັ່ງນັ້ນ ຈຶ່ງຕ້ອງໄປຮຽນເອົາຄວາມຮູ້ຈາກຕ່າງປະເທດ ເຊິ່ງມີຄວາມແຕກຕ່າງຈາກຊຸມຊົນຂອງພວກເຂົາ. ແນວຄວາມຄິດທີ່ພວກເຂົາຮຽນຈາກປະເທດອື່ນ ອາດຈະໝູນໃຊ້ໄດ້ຍາກ ຫຼື ໃຊ້ບໍ່ໄດ້ໃນຊຸມຊົນ ຫຼື ບໍ່ເໝາະສົມກັບໂຮງຮຽນໃນປະເທດຂອງພວກເຂົາ.

ອາຈານທີ່ໄດ້ຮັບການຝຶກອົບຮົມກາຍເປັນແຫຼ່ງຂໍ້ມູນໃຫ້ແກ່ອາຈານຄົນອື່ນໆ. ອາຈານທີ່ສອນເດັກຫູໜວກ ແລະ ອາຈານສອນເດັກຫູດີທີ່ມີປະສົບການສາມາດແລກປ່ຽນນຳກັນເພື່ອເສີມສ້າງສິ່ງທີ່ພວກເຂົາຮູ້ຢູ່ແລ້ວ ການແລກປ່ຽນປະສົບການນຳກັນດັ່ງ ກ່າວຈະເປັນປະໂຫຍດຕໍ່ນັກຮຽນໝົດທຸກຄົນ.



# ຜູ້ໃຫຍ່ຫູໜວກຊ່ວຍໃຫ້ເດັກຫູໜວກຮຽນຮູ້

ຜູ້ໃຫຍ່ຫູໜວກ ແມ່ນຄູທີ່ດີທີ່ສຸດຂອງເດັກຫູໜວກ. ໂຮງຮຽນທີ່ດີຄວນມີຜູ້ໃຫຍ່ຫູໜວກເຂົ້າຮ່ວມໃນຫ້ອງຮຽນເພື່ອເປັນອາຈານ, ຜູ້ແປ ແລະ ຜູ້ຊ່ວຍ. ຜູ້ໃຫຍ່ຫູໜວກ ເຂົ້າໃຈບັນຫາທີ່ເດັກຫູໜວກປະເຊີນຢູ່ ຜູ້ໃຫຍ່ຫູໜວກ ສາມາດກາຍເປັນຕົ້ນແບບໃຫ້ແກ່ເດັກຫູໜວກ ແລະ ສ້າງ ແນວຄິດທາງບວກໃຫ້ແກ່ເດັກກ່ຽວກັບຄົນຫູໜວກ.




*ເດັກທີ່ໃຫຍ່ກວ່າສາມາດຊ່ວຍເຫຼືອ ເດັກຮຸ່ນນ້ອງຮຽນອ່ານ ແລະ ຂຽນ.*

# ເດັກສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການຮຽນ

ເດັກຫຼາຍຄົນຕ້ອງການຄວາມຊ່ວຍເຫຼືອ ເພື່ອຮຽນຮູ້ແນວຄິດທີ່ຍາກຂຶ້ນ ເດັກຫູໜວກຕ້ອງການຄວາມຊ່ວຍເຫຼືອ ແລະ ຄວາມເອົາໃຈໃສ່ເປັນພິເສດ ໃນການຮຽນຮູ້ທັກສະໃນການອ່ານ ແລະ ຂຽນ. ເດັກນ້ອຍຫູດີ ແລະ ເດັກຫູໜວກ, ເດັກທີ່ອາຍຸໃຫຍ່ກວ່າ ແລະ ເດັກທີ່ອາຍຸຍັງນ້ອຍສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການຮຽນທັກສະຕ່າງໆ ພ້ອມທັງເຮັດໃຫ້ເດັກຮູ້ສຶກບໍ່ອຶດອັດ ເມື່ອພວກເຂົາຢູ່ທີ່ໂຮງຮຽນ.

ເມື່ອເດັກມີສ່ວນຮ່ວມໃນການສຶກສາຂອງພວກເຂົາ ແລະ ເຮັດວຽກຮ່ວມກັນເພື່ອແກ້ໄຂບັນຫາ, ເດັກນ້ອຍຈະໄດ້ຮັບການສຶກສາທີ່ເໝາະສົມກັບຄວາມຕ້ອງການຂອງພວກເຂົາ. ພວກເຂົາຈະຮູ້ສຶກໝັ້ນໃຈຕົນເອງ, ໝັ້ນໃຈໃນສິ່ງທີ່ພວກເຂົາຮຽນ ແລະ ໝັ້ນໃຈໃນຄວາມສາມາດຂອງຕົນເອງ ເພື່ອມີສ່ວນຮ່ວມໃນການພັດທະນາສັງຄົມ!

## ເດັກນ້ອຍສາມາດມີສ່ວນຮ່ວມໃນການສຶກສາຂອງພວກເຂົາ

ອາຈານໃນໂຮງຮຽນແຫ່ງໜຶ່ງໃນປະເທດ ຊຳບີ ຊຸກຍູ້ໃຫ້ນັກຮຽນສະແດງອອກຢ່າງເປັນອິດສະຫຼະກ່ຽວກັບສິ່ງທີ່ພວກເຂົາຕ້ອງການຮຽນ. ອາຈານສອນພວກເຂົາໃຫ້ຮູ້ຈັກ ການລົງຄະແນນສຽງໃນຫ້ອງຮຽນ.

ໃນອາທິດທີໜຶ່ງເດັກເລືອກຮຽນກ່ຽວກັບເຫດຜົນວ່າ ເປັນຫຍັງຄົນເຮົາຈຶ່ງຕໍ່ສູ້ກັນ ແລະ ມີສົງຄາມ. ອາທິດຕໍ່ມາພວກເຂົາເລືອກຮຽນກ່ຽວກັບສະພາບອາກາດ ແລະ ເຫດຜົນວ່າເປັນຫຍັງຝົນຈຶ່ງຕົກໃນໄລຍະລະດູຝົນ. ຫຼາຍອາທິດຕໍ່ມາເດັກນ້ອຍມີຄວາມສົນອົກສົນໃຈໃນສິ່ງທີ່ພວກເຂົາຮຽນຂຶ້ນເລື້ອຍໆ. ພວກເຂົາປະພຶດຕົວດີຂຶ້ນ ແລະ ມາໂຮງຮຽນຢ່າງເປັນປົກກະຕິ.

ໃນຕອນທ້າຍຂອງປີຮຽນ, ພວກເດັກນ້ອຍຈຶ່ງ



ພາກັນ ເລາະໄປຕາມບ້ານ ເພື່ອຊອກຫາເດັກຄົນອື່ນທີ່ບໍ່ໄດ້ເຂົ້າໂຮງຮຽນ ແລະ ຊັກຊວນໃຫ້ມາຮຽນນຳພວກເຂົາ.

## ການສະໜັບສະໜູນຂອງຄອບຄົວຕໍ່ໂຮງຮຽນແມ່ນມີຄວາມສຳຄັນ

ພໍ່ແມ່ມີບົດບາດສຳຄັນທີ່ສຸດໃນການສຶກສາຂອງເດັກຫູໜວກ. ພໍ່ແມ່ຜູ້ມີປະສົບການສາມາດແລກປ່ຽນບົດຮຽນກັບໂຮງຮຽນ ເພື່ອຊ່ວຍການສິດສອນໃຫ້ແກ່ເດັກຫູໜວກ. ພໍ່ແມ່ຍັງສາມາດຮ່ວມເຮັດວຽກກັບຊຸມຊົນ ເພື່ອເຮັດໃຫ້ໂຮງຮຽນມີການປັບປຸງໃຫ້ດີຂຶ້ນ ສຳລັບເດັກຫູໜວກ.

ໂຮງຮຽນທີ່ດີແມ່ນໂຮງຮຽນທີ່ມີກຸ່ມພໍ່ແມ່ນັກຮຽນທີ່ມີຄວາມຫ້າວຫັນ ສາມາດໂອ້ລົມກັນກ່ຽວກັບຄວາມຕ້ອງການທາງດ້ານການສຶກສາ ແລະ ຄວາມຮູ້ສຶກຂອງແຕ່ລະຄອບຄົວທີ່ມີລູກຫູໜວກ.




## ໂຮງຮຽນທີ່ດີຕ້ອງກະກຽມຄວາມພ້ອມໃຫ້ເດັກເພື່ອການຫາລ້ຽງຊີບ

ຜູ້ເປັນພໍ່ແມ່ ຂອງເດັກຫູໜວກ ຫຼື ເດັກທີ່ມີບັນຫາໃນການໄດ້ຍິນ ແມ່ນມີຄວາມກັງວົນຕໍ່ອະນາຄົດຂອງລູກຂອງພວກເຂົາ. ກັງວົນວ່າລູກຂອງພວກເຂົາຈະສາມາດຫາລ້ຽງຊີບ ເພື່ອກຸ້ມຕົນເອງ ແລະ ຄອບຄົວຂອງພວກເຂົາໄດ້ແນວໃດ?

ໂຮງຮຽນສຳລັບຄົນຫູໜວກບາງແຫ່ງສອນທັກສະອາຊີບໃຫ້ແກ່ນັກຮຽນ ເພື່ອໃຫ້ພວກເຂົາສາມາດໝູນໃຊ້ປະກອບອາຊີບ ຫຼື ເຮັດທຸລະກິດຂອງພວກເຂົາເອງ. ການຖັກແສ່ວ ແລະ ວຽກກ່ຽວກັບໄມ້ ແມ່ນບັນດາວິຊາຊີບ ທີ່ມັກມີການສິດສອນໃນຫຼັກສູດວິຊາຊີບ ແລະ ຍັງມີຫຼັກສູດວິຊາຊີບອື່ນໆ ທີ່ເດັກຫູໜວກສາມາດໃຊ້ປະກອບອາຊີບ ພາຍຫຼັງການສຳເລັດການສຶກສາເຊັ່ນ: ທັກສະ ດ້ານຄອມພິວເຕີ, ການສ້ອມແປງເຄື່ອງຈັກ, ເຕັກໂນໂລຊີການພິມ, ການບັນຊີ, ການແຕ່ງກິນ, ການກະເສດ ແລະ ສິລະປະ. ໃນຕົວຈິງ ຄົນຫູໜວກຈະບໍ່ສາມາດຊອກວຽກເຮັດໄດ້ເລີຍ ຖ້າ ເຂົາຫາກບໍ່ມີຄວາມສາມາດໃນວິຊາຊີບນັ້ນຢ່າງດີເລີດ.

ທີ່ໂຮງຮຽນກິນນອນ ສຳລັບຄົນຫູໜວກແຫ່ງໜຶ່ງໃນປະເທດ ຣູມານີ, ມີນັກຮຽນທີ່ມາຈາກທົ່ວປະເທດ. ບາງຄັ້ງກໍ່ມາຈາກບ້ານນ້ອຍໆທີ່ຫ່າງອອກໄປຫຼາຍກວ່າ 200 ກິໂລແມັດ. ເດັກນ້ອຍໃຊ້ເວລາ 9 ເດືອນໃນປີຮຽນໜຶ່ງໆ ຢູ່ທີ່ໂຮງຮຽນ, ດັ່ງນັ້ນ ໂຮງຮຽນຫຼັງນີ້ຈຶ່ງກາຍເປັນຫຼັງທີສອງ ຂອງພວກເຂົາ.



ຢູ່ທີ່ໂຮງຮຽນ ທຸກໆຄົນໃຊ້ເຄື່ອງຊ່ວຍຟັງ, ຮຽນຮູ້ຄຳເວົ້າ ແລະ ການອ່ານຮີມສົບ ພວກເຂົາຮຽນຮູ້ການໝູນໃຊ້ດິນໜຽວ ເພື່ອປະດິດເຄື່ອງປັ້ນດິນເຜົາ. ນັກຮຽນຫຼາຍຄົນອອກຈາກໂຮງຮຽນໄປເມື່ອພວກເຂົາອາຍຸ 14 ປີ ແລະ ພວກເຂົາປະກອບອາຊີບເປັນຊ່າງປັ້ນທີ່ມີຄວາມຊຳນິຊຳນານ.

# ຮ່ວມມືກັນເພື່ອເຮັດໃຫ້ເດັກຫູໜວກປະສົບຜົນສຳເລັດ

ເດັກຫູໜວກສາມາດປະສົບຜົນສຳເລັດໄດ້ ເມື່ອພໍ່ແມ່, ໂຮງຮຽນ ແລະ ຊຸມຊົນ ຮ່ວມມື ກັນເພື່ອສ້າງສະພາບແວດລ້ອມໃນທາງບວກໃຫ້ແກ່ເດັກ. ການສຶກສາທີ່ດີສຳລັບເດັກຫູໜວກແມ່ນຂຶ້ນກັບຫຼາຍປັດໃຈ ແລະ ຂຶ້ນກັບວ່າ:

- ເດັກຮຽນ ແລະໝູນໃຊ້ພາສາ ຫຼື ບໍ່.
- ມີການສິດສອນທີ່ດີ, ການສື່ສານທີ່ດີ ແລະ ການມີສ່ວນຮ່ວມຂອງຄອບຄົວ ຫຼື ບໍ່.
- ຊຸມຊົນໄດ້ສ້າງໂອກາດໃຫ້ແກ່ຄົນຫູໜວກ ເພື່ອປະສົບຜົນສຳເລັດ ຫຼື ບໍ່.

ພໍ່ແມ່, ໂຮງຮຽນ ແລະ ຊຸມຊົນສາມາດຮ່ວມມືກັນເພື່ອໃຫ້ມີການຝຶກອົບຮົມທາງດ້ານ ວິຊາຊີບ ສຳລັບຊາວໜຸ່ມທີ່ຫູໜວກ, ໃຫ້ມີວຽກສຳລັບຄົນຫູໜວກ ແລະ ໃຫ້ມີເງິນກູ້ຢືມສຳລັບພວກເຂົາ ເພື່ອດຳເນີນທຸລະກິດຂະໜາດນ້ອຍ.

ຊຸມຊົນບາງແຫ່ງຄິດໄລ່ ອັດຕາອາກອນທີ່ຕ່ຳ ຫຼື ໃຫ້ການຊ່ວຍເຫຼືອທາງດ້ານການເງິນໃຫ້ແກ່ບັນດາທຸລະກິດທີ່ຮັບເອົາຄົນຫູໜວກ ຫຼື ຄົນທີ່ມີບັນຫາໃນການໄດ້ຍິນ ເຂົ້າເຮັດວຽກນຳ. ບັນດາອົງການຈັດຕັ້ງຂອງຊຸມຊົນໄດ້ຈັດຕັ້ງໃຫ້ມີກອງທຶນເງິນກູ້ໝູນວຽນສຳລັບຊ່າງຫັດຖະກຳທີ່ຫູໜວກ ເພື່ອສະໜອງທຶນຮອນໃນການຊື້ອຸປະກອນພື້ນຖານ ແລະ ວັດຖຸດິບສຳລັບການເລີ່ມເຮັດທຸລະກິດນ້ອຍໆ ຂອງພວກເຂົາເອງ. ເງິນກູ້ຢືມດັ່ງກ່າວ ຈະໄດ້ຮັບການຊຳລະຄືນເທື່ອລະໜ້ອຍ, ເພື່ອວ່າເງິນຈຳນວນນີ້ຈະໝູນໃຊ້ຊ່ວຍເຫຼືອຄົນຫູໜວກຜູ້ອື່ນໆທີ່ຕ້ອງການເລີ່ມຕົ້ນທຸລະກິດ.







ຄົນໜຸ່ມຫູໜວກສາມາດຕັດສິນໃຈເລືອກ ວ່າທັກສະໃດທີ່ເຂົາຕ້ອງການຢາກຮຽນ ເຊິ່ງມັນກໍ່ຂຶ້ນກັບຄວາມສາມາດ ແລະ ຄວາມສົນໃຈຂອງເຂົາ. ພ້ອມນັ້ນກໍ່ຂຶ້ນກັບຊັບພະຍາກອນທີ່ມີ ໃນທ້ອງຖິ່ນ, ຕະຫຼາດ, ໂອກາດໃນການໄດ້ຮັບການຝຶກອົບຮົມ ແລະ ປັດໃຈອື່ນໆອີກ.

### ຄົນທາສີເຮືອນຄົ້ນຫາຄວາມສຳເລັດ

ເຄືອຂ່າຍກຸ່ມຜູ້ຊາຍຫູໜວກໃນຕອນໃຕ້ຂອງປະເທດອິນເດຍໄດ້ດຳເນີນທຸລະກິດທາສີເຮືອນ. ຄົນສ່ວນຫຼາຍມັກໃຫ້ພວກເຂົາທາສີເຮືອນໃຫ້ ຍ້ອນວ່າພວກເຂົາທາສີໄດ້ໄວກວ່າຊ່າງທາສີຜູ້ອື່ນໆ. ບາບູ ເຊິ່ງເປັນຫົວໜ້າກຸ່ມແມ່ນຜູ້ທີ່ມີທັກສະໃນການເຈລະຈາຕໍ່ລອງ ແລະມີຄວາມກະຕືລືລົ້ນ ເພື່ອຊອກຫາວຽກໃໝ່ໆ. ເມື່ອເຮືອນຖືກປຸກຂຶ້ນຫຼາຍ ຫຼື ມີການປັບປຸງສ້ອມແປງ, ຫຼາຍໆຄົນ ຈຶ່ງສັງເກດເຫັນວ່າ ຊາຍຫູໜວກກຸ່ມນີ້ມີທັກສະໃນການເຮັດວຽກ ແລະ ພວກເຂົາກໍ່ໄດ້ຮັບຄວາມນິຍົມຫຼາຍ.



ໃນຂະນະທີ່ປຶ້ມຫົວນີ້ແມ່ນໃຫ້ຄວາມສຳຄັນແກ່ການຊ່ວຍເຫຼືອເດັກຫູໜວກ ຕັ້ງແຕ່ອາຍຸຍັງນ້ອຍໃຫ້ໄວເທົ່າໃດຍິ່ງດີ. ມັນກໍ່ເປັນສິ່ງສຳຄັນທີ່ຕ້ອງໃຫ້ຄວາມຊ່ວຍເຫຼືອແກ່ຄົນຫູໜວກໃນໄວຜູ້ໃຫຍ່. ຊຸມຊົນຈະມີຄວາມເຂັ້ມແຂງທີ່ສຸດ ຖ້າພວກເຂົາສາມາດດູແລກັນ ແລະ ກັນໄດ້.

ຂ້ອຍຊື່ວ່າໂຊກູ. ຂ້ອຍດຳລົງຊີວິດຢູ່ໃນປະເທດມົງໂກລີ ແລະ ນີ້ແມ່ນບົດເລື່ອງຂອງຂ້ອຍ.



## ການຮຽນບໍ່ມີຄຳວ່າ "ສວາຍເກີນໄປ"

ໂຊກູສູນເສຍຄວາມສາມາດໃນການໄດ້ຍິນ ຫຼັງຈາກທີ່ລາວເຈັບປ່ວຍໜັກ ເມື່ອຕອນອາຍຸໄດ້ 3 ປີ. ເມື່ອໃຫຍ່ຂຶ້ນລາວຢູ່ແຕ່ເຮືອນ ໃນຂະນະທີ່ອ້າຍ ແລະ ເອື້ອຍໄປເຂົ້າໂຮງຮຽນ ຄອບຄົວຂອງໂຊກູໝູນໃຊ້ສັນຍະລັກຈຳນວນໜຶ່ງ ທີ່ໃຊ້ພາຍໃນເຮືອນ ເພື່ອສື່ສານກັບລາວ ແຕ່ວ່າໂຊກູ ໃຊ້ເວລາສ່ວນຫຼາຍຢູ່ຢ່າງໂດດດ່ຽວ, ລາວເປັນຜູ້ດູແລມ້າ, ແກະ ແລະ ແບ້ ຂອງຄອບຄົວ.

ມື້ໜຶ່ງພໍ່ແມ່ຂອງລາວໄດ້ຮູ້ວ່າມີຫ້ອງຮຽນໃໝ່ສຳລັບຜູ້ໃຫຍ່ຫູໜວກທີ່ບໍ່ເຄີຍເຂົ້າຮຽນໃນໂຮງຮຽນ ເຊິ່ງຈັດຕັ້ງຂຶ້ນໂດຍກຸ່ມຂອງຊຸມຊົນ. ຫຼັງຈາກໂຊກູໄດ້ເຂົ້າຮ່ຳຮຽນຢ່າງໜັກຢູ່ທີ່ນັ້ນ ເປັນເວລາ 2 ປີ, ໃນທີ່ສຸດລາວກໍ່ສາມາດສື່ສານກັບເພື່ອນຮ່ວມຫ້ອງ, ສາມາດອ່ານຂຽນ ແລະ ຄິດໄລ່ເລກໄດ້.

ໂຊກູ ຕັດສິນໃຈວ່າລາວຕ້ອງການສືບຕໍ່ຮຽນທັກສະວິຊາຊີບເໝືອນກັບເພື່ອນໆທີ່ຮ່ວມໂຄງການດຽວກັນ ແລະ ລາວກໍ່ໄດ້ຖືກຮັບເຂົ້າຮຽນໃນໂຮງຮຽນຝຶກອົບຮົມວິຊາຊີບເພື່ອຮຽນເປັນຊ່າງໄມ້.

ໂຊກູ ເປັນຄົນລ້ຽງສັດທີ່ເກັ່ງ. ແຕ່ລາວຢູ່ຢ່າງໂດດດ່ຽວພວກເຮົາບໍ່ຢາກໃຫ້ໂລກຂອງ ໂຊກູ ຈຳກັດພຽງເທົ່ານີ້.

ພວກເຮົາຕ້ອງການໃຫ້ເຂົາມີເພື່ອນ, ຮູ້ອ່ານ ແລະ ຂຽນ ຫຼື ຮຽນຮູ້ວິຊາຊີບ ເພື່ອໃຫ້ລາວມີຊີວິດທີ່ດີຂຶ້ນ.



ຍ້ອນມີວຽກທີ່ດີ, ຂ້ອຍຈຶ່ງສາມາດຄິດເຖິງການແຕ່ງດອງ ແລະ ເລີ່ມຕົ້ນມີຄອບຄົວຂອງຕົນເອງ.



ແລະ ລູກສາວຂອງພວກເຮົາກໍ່ມີພໍ່ທີ່ມີຄວາມກະຕືລືລົ້ນ ແລະ ມຸ່ງໝັ້ນ!